ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ

ຫ້ອງການ ເລກທີ: 1824/ຫອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 17 ສິງຫາ 2017

# <u>ແຈ້ງການ</u>

ຮຽນ: ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງ;
ທ່ານ ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງທີ່ມີຊາຍແດນຕິດກັບ ສສ ຫວຽດນາມ.

ເລື່ອງ: ການຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ສິດພິເສດຕາມສັນຍາການຄ້າຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ

- ອີງຕາມ ສັນຍາວ່າດ້ວຍການຄ້າຊາຍແດນ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ ສະບັບລົງວັນທີ 27 ມິຖຸນາ 2015;
- ອີງຕາມ ບົດແນະນຳ ກ່ຽວກັບການຈັດຕັ້ງປະຕິບັດບາງມາດຕາ ໃນສັນຍາການຄ້າຊາຍແດນ ລາວ-ຫວຽດນາມ ສະບັບເລກທີ 0280/ອຄ.ກນຄຕ, ລົງວັນທີ 27 ກຸມພາ 2017;
- ອີງຕາມ ຄຳແນະນຳ ກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ສະບັບເລກທີ 2225/ອຄ.ກຂອ, ລົງວັນທີ 05 ທັນວາ 2014.

ເພື່ອເປັນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດສັນຍາການຄ້າຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ (ຕໍ່ໄປນີ້ເອີ້ນວ່າ ສັນຍາການຄ້າຊາຍແດນ ລາວ-ຫວຽດນາມ) ກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດພິເສດ ໃຫ້ມີຄວາມເປັນເອກະພາບກັນໃນທົ່ວປະເທດ.

ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ ດັ່ງນີ້:

1. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ ປະຕິບັດ ດັ່ງນີ້:
   1.1. ອອກໃບຢັ້ງຢືນແຫຼ່ງກຳເນີດໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດຕາມທີ່ລະບຸໃນຂໍ້ 01 ມາດຕາ 06 (ເອກະສານຊ້ອນທ້າຍ 01) ຂອງສັນຍາການຄ້າຊາຍແດນ ລາວ-ຫວຽດນາມ;
   1.2. ສະເພາະ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ທີ່ມີຊາຍແດນຕິດກັບ ສສ ຫວຽດນາມ ສາມາດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຕາມທີ່ລະບຸໄວ້ໃນ ມາດຕາ 07 (ເອກະສານຊ້ອນທ້າຍ 02 ແລະ 03) ຂອງສັນຍາການຄ້າຊາຍແດນ ລາວ-ຫວຽດນາມ;
   1.3. ຊຸກຍູ້, ເຜີຍແຜ່, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ກ່ຽວກັບການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຂອງບັນດາເມືອງຊາຍແດນ;

1.4. ສັງລວມ ແລະ ວິໄຈ ຂໍ້ມູນການຈັດຕັ້ງປະຕິບັດການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ເພື່ອລາຍງານໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ (ກົມການນຳເຂົ້າ ແລະ ສົ່ງອອກ) ຊາບຢ່າງເປັນປົກກະຕິ;

1.5. ລາຍງານສະຖິຕິການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ຊາບທຸກ 03 ເດືອນ ໂດຍຊ້າສຸດບໍ່ໃຫ້ກາຍວັນທີ 15 ຂອງເດືອນສຸດທ້າຍ;

1.6. ເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ;

1.7. ເກັບຮັກສາສຳເນົາເອກະສານການຢັ້ງຢືນແຫຼ່ງກຳເນີດສິນຄ້າ ຄົບຊຸດເປັນໄລຍະເວລາ 02 ປີ;

1.8. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂອງຝ່າຍລາວ ຫຼື ຝ່າຍຫວຽດນາມ ເພື່ອແກ້ໄຂບັນຫາທີ່ເກີດຂຶ້ນ ໃນການຈັດຕັ້ງປະຕິບັດການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ.

2. ມອບໃຫ້ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ທີ່ມີຊາຍແດນຕິດກັບ ສສ ຫວຽດນາມ ປະຕິບັດດັ່ງນີ້:

2.1 ອອກໃບຢັ້ງຢືນແຫຼ່ງກຳເນີດໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດຕາມທີ່ລະບຸໃນຂໍ້ 04 ມາດຕາ 05 ແລະ ມາດຕາ 07 (ເອກະສານຊ້ອນທ້າຍ 02 ແລະ 03) ຂອງສັນຍາການຄ້າຊາຍແດນ ລາວ-ຫວຽດນາມ;

2.2 ລາຍງານສະຖິຕິການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ຂອງຕົນຊາບທຸກ 03 ເດືອນ ໂດຍຊ້າສຸດບໍ່ໃຫ້ກາຍວັນທີ 10 ຂອງເດືອນສຸດທ້າຍ;

2.3 ເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ;

2.4 ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງພາຍໃນເມືອງ ແລະ ປະສານກັບພະແນກອຸດສາຫະກຳ ແລະ ການຄ້າແຂວງ ເພື່ອພ້ອມກັນແກ້ໄຂບັນຫາທີ່ເກີດຂຶ້ນ ໃນການຈັດຕັ້ງປະຕິບັດການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ;

2.5 ເກັບຮັກສາສຳເນົາເອກະສານການຢັ້ງຢືນແຫຼ່ງກຳເນີດສິນຄ້າ ຄົບຊຸດເປັນໄລຍະເວລາ 02 ປີ.

3. ສຳລັບຂັ້ນຕອນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ, ແບບຟອມໃບຄຳຮ້ອງ ແລະ ແບບຟອມໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ໄດ້ມີເອກະສານຄັດຕິດມາພ້ອມນີ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

ຫົວໜ້າຫ້ອງການ,

ທ.ບານສະຕິ ເທບພະວົງ

**ເອກະສານຄັດຕິດ 01**

**ຂັ້ນຕອນ**

**ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຕາມສັນຍາການຄ້າຊາຍແດນ ລາວ-ຫວຽດນາມ**

I. **ເອກະສານປະກອບ:**

1. **ສຳລັບປະຊາຊົນເມືອງຊາຍແດນທີ່ຕິດກັບ ສສ ຫວຽດນາມ:**
   1) ໃບຄຳຮ້ອງ (ຕາມແບບຟອມທີ່ໄດ້ກຳນົດ);
   2) ສຳເນົາບັດປະຈຳຕົວ ຫຼື ສຳເນົາປຶ້ມສຳມະໂນຄົວ;
   3) ໃບຢັ້ງຢືນສຸຂານາໄມ ແລະ ສຸຂານາໄມພືດ (ຖ້າຝ່າຍຫວຽດນາມຮຽກຮ້ອງ).
2. **ສຳລັບພາກທຸລະກິດ**

   ສິນຄ້າທີ່ມີແຫຼ່ງກຳເນີດຈາກ ລາວ ພາຍໃຕ້ການລົງທຶນຂອງນັກລົງທຶນຫວຽດນາມ ທີ່ໄດ້ລະບຸໃນ ມາດຕາ 07 (ເອກະສານຊ້ອນທ້າຍ 02 ແລະ 03) ແລະ ສິນຄ້າທີ່ມີແຫຼ່ງກຳເນີດຈາກ ລາວ ຂອງທຸລະກິດທົ່ວໄປ ທີ່ໄດ້ລະບຸໃນ ຂໍ້ 01 ມາດຕາ 06 (ເອກະສານຊ້ອນທ້າຍ 01) ຂອງສັນຍາການຄ້າຊາຍແດນ ລາວ-ຫວຽດນາມ ຕ້ອງປະກອບເອກະສານ ດັ່ງນີ້:
   1) ໃບຄຳຮ້ອງ (ຕາມແບບຟອມທີ່ໄດ້ກຳນົດ);
   2) ສຳເນົາ ບັດປະຈຳຕົວ/ສຳມະໂນຄົວ/ໜັງສືຜ່ານແດນ ຫຼື ໃບມອບສິດ;
   3) ສຳເນົາໃບທະບຽນວິສາຫະກິດ;
   4) ສຳເນົາໃບທະບຽນອາກອນ;
   5) ເອກະສານຢັ້ງຢືນການລົງທຶນ ຫຼື ຮ່ວມທຶນ (ໃນກໍລະນີມີຄວາມຕ້ອງການ);
   6) ໃບຢັ້ງຢືນສຸຂານາໄມ ແລະ ສຸຂານາໄມພືດ (ຖ້າຝ່າຍຫວຽດນາມຮຽກຮ້ອງ).

II. **ການຍື່ນເອກະສານ**

1. ສຳລັບປະຊາຊົນເມືອງຊາຍແດນທີ່ຕິດກັບ ສສ ຫວຽດນາມ: ຍື່ນເອກະສານຢູ່ຫ້ອງການການຄ້າເມືອງ ບ່ອນທີ່ຕົນມີການລົງທຶນ ຫຼື ຜະລິດ;
2. ສຳລັບພາກທຸລະກິດທີ່ມີເງື່ອນໄຂຕາມມາດຕາ 07 ຂອງສັນຍາການຄ້າຊາຍແດນ ລາວ-ຫວຽດນາມ: ຍື່ນເອກະສານຢູ່ພະແນກອຸດສາຫະກຳ ແລະ ການຄ້າແຂວງ ຫຼື ຫ້ອງການການຄ້າເມືອງ ບ່ອນທີ່ຕົນມີການລົງທຶນ, ຜະລິດ ຫຼື ເກັບຊື້;
3. ສຳລັບພາກທຸລະກິດທົ່ວໄປ: ຍື່ນເອກະສານຢູ່ພະແນກອຸດສາຫະກຳ ແລະ ການຄ້າແຂວງ ຫຼື ນະຄອນຫຼວງ ບ່ອນທີ່ຕົນມີການລົງທຶນ, ຜະລິດ ຫຼື ເກັບຊື້.

III. **ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ:**

1. ເມື່ອກວດເບິ່ງວ່າເອກະສານຖືກຕ້ອງ ແລະ ຄົບຖ້ວນ ເຈົ້າໜ້າທີ່ຕ້ອງຄົ້ນຄວ້າອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ໃຫ້ຜູ້ຂໍຢັ້ງຢືນແຫຼ່ງກຳເນີດສິນຄ້າ ພາຍໃນເວລາ 02 ວັນລັດຖະການ;
2. ຜູ້ຂໍຢັ້ງຢືນແຫຼ່ງກຳເນີດສິນຄ້າ ຕ້ອງໄດ້ຈ່າຍຄ່າທຳນຽມໃນການອອກໃບຢັ້ງຢືນແຫຼ່ງກຳເນີດ ໃບບິນ ຫຼື ຫຼັກຖານໃນການຈ່າຍຄ່າທຳນຽມ ຈະຖືກໃຊ້ເພື່ອມາຍື່ນຮັບເອົາໃບຢັ້ງຢືນແຫຼ່ງກຳເນີດສິນຄ້ານຳເຈົ້າໜ້າທີ່ (ສຳລັບຄ່າທຳນຽມ ແມ່ນອີງຕາມລັດຖະບັນຍັດຂອງປະທານປະເທດ ແລະ ລະບຽບການທີ່ກ່ຽວຂ້ອງກັບການເກັບຄ່າທຳນຽມ ແລະ ການບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ).
3. ອາຍຸການນຳໃຊ້ ແລະ ການເກັບຮັກສາ:
   1) ໃບຢັ້ງຢືນທີ່ອອກໂດຍເຈົ້າໜ້າທີ່ ຈະມີ 03 ສະບັບ (01 ສະບັບຕົ້ນ ແລະ 02 ສະບັບສຳເນົາ) ເຊິ່ງສະບັບຕົ້ນແມ່ນນຳໃຊ້ປະກອບເອກະສານໃນການສົ່ງອອກສິນຄ້າໄປ ສສ ຫວຽດນາມ ທີ່ຕ້ອງການນຳໃຊ້ສິດທິພິເສດຕາມສັນຍາການຄ້າຊາຍແດນ ລາວ-ຫວຽດນາມ;

2) ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຈະມີອາຍຸການນຳໃຊ້ 06 ເດືອນ ນັບແຕ່ມື້ອອກເປັນຕົ້ນໄປ ແລະ ສາມາດ ນຳໃຊ້ໄດ້ຄັ້ງດຽວຕໍ່ສິນຄ້າທີ່ແຈ້ງໃນໃບຢັ້ງຢືນເທົ່ານັ້ນ;
3) ເກັບຮັກສາສຳເນົາໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ: ຜູ້ຂໍຢັ້ງຢືນແຫຼ່ງກຳເນີດສິນຄ້າ ແລະ ເຈົ້າໜ້າທີ່ ຕ້ອງ ເກັບຮັກສາສຳເນົາການເອກະສານການຢັ້ງຢືນແຫຼ່ງກຳເນີດສິນຄ້າໄວ້ຢ່າງໜ້ອຍ 02 ປີ ນັບແຕ່ວັນອອກ ໃບ ຢັ້ງຢືນແຫຼ່ງກຳເນີດສິນຄ້າເປັນຕົ້ນໄປ.

## IV. ການດັດແກ້ ຫຼື ລຶບລ້າງໃບຢັ້ງຢືນ

ກໍລະນີໃບຢັ້ງຢືນແຫຼ່ງກຳເນີດສິນຄ້າເສຍ, ຖືກທຳລາຍ ແລະ ການດັດແກ້ຂໍ້ມູນໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ແມ່ນໃຫ້ປະກອບເອກະສານ ແລະ ປະຕິບັດຕາມຂັ້ນຕອນທີ່ໄດ້ລະບຸໄວ້ໃນ ຂໍ້ 2.2 ແລະ 2.3 ຂອງ ຄຳແນະນຳ ກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ສະບັບເລກທີ 2225/ອຄ.ກຂອ, ລົງວັນທີ 05 ທັນວາ 2014.

<u>ໝາຍເຫດ</u>:

❖ ການສະເໜີຂໍໃບຢັ້ງຢືນສຸຂານາໄມ ແລະ ສຸຂານາໄມພືດ ຕາມສັນຍາການຄ້າຊາຍແດນ ລາວ-ຫວຽດນາມ ແມ່ນໃຫ້ປະຕິບັດຕາມ ຄຳແນະນຳ ກ່ຽວກັບ ການຈັດຕັ້ງວຽກງານສຸຂານາໄມ ແລະ ສຸຂານາໄມພືດ ພາຍໃຕ້ສັນຍາການຄ້າຊາຍແດນ ລາວ-ຫວຽດນາມ ສະບັບເລກທີ 0162/ກປ, ລົງວັນທີ 01 ກຸມພາ 2017;
❖ ໃນກໍລະນີຈຳເປັນຕ້ອງການລົງຢ້ຽມຢາມເບິ່ງພື້ນຖານຂະບວນການຜະລິດຕົວຈິງ ແມ່ນຈະລົງ 01 ຄັ້ງ/ປີ ກຳນົດເວລາທີ່ໃຊ້ໃນການລົງເຮັດວຽກແຕ່ລະຄັ້ງແມ່ນໃຫ້ອີງຕາມສະພາບຕົວຈິງ ເຊິ່ງສູງສຸດບໍ່ໃຫ້ກາຍ 07 ວັນລັດຖະການ.

<u>ແຜນວາດຂັ້ນຕອນການຂໍ ແລະ ການອອກໃບຢັ້ງຢືນ</u>



ເອກະສານຄັດຕິດ 02

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ............................ ເລກທີ:.....................

ທີ່......................, ວັນທີ...................

# ໃບຄຳຮ້ອງ

**ຮຽນ:** ..........................................................................................

**ເລື່ອງ: ຂໍອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຕາມສັນຍາການຄ້າຊາຍແດນ ລາວ-ຫວຽດນາມ**

ຂ້າພະເຈົ້າ (ຊື່ ແລະ ນາມສະກຸນ/ຊື່ບໍລິສັດ):...............................................................................;
ທີ່ຢູ່/ທີ່ຕັ້ງສຳນັກງານ ບ້ານ:..........................................; ເມືອງ:..........................................;
ແຂວງ:..................................; ເບີໂທຕິດຕໍ່:.............................; ແຟັກ:..................................;
ອີເມວ:.................................................; ບັດປະຈຳຕົວ/ທະບຽນວິສາຫະກິດ ເລກທີ: .........................
ລົງວັນທີ:......................... ອອກໃຫ້ໂດຍ: ...................................................................
ມີຈຸດປະສົງສະເໜີຂໍອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ດັ່ງມີລາຍລະອຽດລຸ່ມນີ້:

| ລ/ດ | ຊື່ລາຍການສິນຄ້າ | ລະຫັດສິນຄ້າ HS | ຈຳນວນ | ຫົວໜ່ວຍ | ມູນຄ່າ | ສິນຄ້າມີແຫຼ່ງກຳເນີດມາຈາກ ເມືອງ/ແຂວງ ຫຼື ນະຄອນຫຼວງ |
|---|---|---|---|---|---|---|
| | | | | | | |

ຂ້າພະເຈົ້າຂໍຢັ້ງຢືນວ່າ ຂໍ້ມູນຂ້າງເທິງນັ້ນແມ່ນຄວາມຈິງທຸກປະການ.
ດັ່ງນັ້ນ, ຈຶ່ງໄດ້ສະເໜີມາຍັງທ່ານ ເພື່ອພິຈາລະນາຕາມທາງຄວນດ້ວຍ.

ລາຍເຊັນຜູ້ຮ້ອງຂໍ

ຊື່ແຈ້ງ

(ປະທັບກາບໍລິສັດ)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ............................. ເລກທີ:.....................

ທີ່......................., ວັນທີ....................

# ໃບຄຳຮ້ອງ

**ຮຽນ: ..........................................................................................................**

**ເລື່ອງ: ຂໍດັດແກ້ ຫຼື ລຶບລ້າງ ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຕາມສັນຍາການຄ້າຊາຍແດນ ລາວ-ຫວຽດນາມ**

ຂ້າພະເຈົ້າ (ຊື່ ແລະ ນາມສະກຸນ/ຊື່ບໍລິສັດ):...........................................................................;

ທີ່ຢູ່/ທີ່ຕັ້ງສຳນັກງານ ບ້ານ:............................................; ເມືອງ:..........................................;

ແຂວງ:.................................; ເບີໂທຕິດຕໍ່:............................; ແຟັກ:.............................;

ອີເມວ:..................................................; ບັດປະຈຳຕົວ/ທະບຽນວິສາຫະກິດ ເລກທີ: ...................

ລົງວັນທີ:..................... ອອກໃຫ້ໂດຍ: .........................................................................

ຂໍສະເໜີ ☐ ດັດແກ້/ ☐ ລຶບລ້າງ ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ສະບັບເກົ່າ ເລກທີ: ............ ລົງວັນທີ ............

ເຫດຜົນຍ້ອນ ...................................................................................................................

......................................................................................................................................

......................................................................................................................................

......................................................................................................................................

......................................................................................................................................

......................................................................................................................................

ລາຍເຊັນຜູ້ຮ້ອງຂໍ

ຊື່ແຈ້ງ

(ປະທັບກາບໍລິສັດ)

ເອກະສານຄັດຕິດ 03

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**CỘNG HÒA DÂN CHỦ NHÂN DÂN LÀO**

**Hòa bình – Độc lập – Dân chủ - Thống nhất – Thịnh vượng**

# ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຕາມສັນຍາການຄ້າຊາຍແດນ ລາວ-ຫວຽດນາມ

**Giấy chứng nhận nguồn gốc xuất xứ hàng hóa theo Hiệp định Thương mại biên giới Lào – Việt Nam**

ເລກທີ/Số…………………..

ວັນທີ/Ngày…………………

ຊື່ບໍລິສັດ ຫຼື ຜູ້ສົ່ງອອກ/Tên công ty hoặc nhà xuất khẩu: ..........................................................................................................

ທີ່ຢູ່/Địa chỉ: ບ້ານ/Bản................................................ ເມືອງ/Huyện..........................................ແຂວງ/Tỉnh.........................................

ເບີໂທ/Điện thoại..................................................................ເບີແຟັກ/Số Fax......................................................................

| ລ/ດ<br>STT | ລາຍການສິນຄ້າ<br>Danh mục hàng hóa | ລະຫັດສິນຄ້າ<br>HS/Mã HS<br>(ຖ້າມີ/nếu có) | ຈຳນວນ<br>Số lượng | ຫົວໜ່ວຍ<br>Đơn vị | ເມືອງ/ແຂວງ ທີ່ເປັນແຫຼ່ງກຳເນີດຂອງສິນຄ້າ ໂດຍມີຊາຍແດນຕິດກັບຫວຽດນາມ/<br>Huyện/tỉnh nơi có nguồn gốc xuất xứ hàng hóa có biên giới tiếp giáp với Việt Nam | ເມືອງ/ແຂວງ ຫຼື ນະຄອນຫຼວງ ທີ່ເປັນແຫຼ່ງກຳເນີດຂອງສິນຄ້າ ໂດຍບໍ່ມີຊາຍແດນຕິດກັບຫວຽດນາມ/<br>Huyện/tỉnh hoặc thủ đô có nguồn gốc xuất xứ hàng hóa không có biên giới tiếp giáp với Việt Nam | ເມືອງ/ແຂວງ ທີ່ເປັນແຫຼ່ງກຳເນີດຂອງສິນຄ້າພາຍໃຕ້ການລົງທຶນຂອງນັກລົງທຶນຫວຽດນາມ/Huyện/tỉnh có nguồn gốc xuất xứ do nhà đầu tư Việt Nam |
|---|---|---|---|---|---|---|---|
| | | | | | | | |

ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ/ພະແນກແນກອຸດສາຫະກຳ ແລະ ການຄ້າແຂວງ/ນະຄອນຫຼວງ ຢັ້ງຢືນວ່າ ຂໍ້ມູນທັງໝົດທີ່ກຳນົດໄວ້ໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າມີຄວາມຖືກຕ້ອງ ແລະ ມີຄວາມຈິງທຸກປະການ/Phòng Công Thương huyện/ Sở Công thương xác nhận thông tin trên của giấy chứng nhận nguồn gốc xuất xứ hàng hóa hoàn toàn đúng sự thật.

**ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ/ຫ້ອງການການຄ້າເມືອງ**

**Giám đốc Sở Công thương/Phòng Công Thương huyện**

ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ/ພະແນກອຸດສາຫະກຳ ແລະ ການຄ້າແຂວງ ຫຼື ນະຄອນຫຼວງ/Phòng Công Thương huyện/ Sở Công Thương tỉnh hoặc thủ đô: ................................................

ເບີໂທ/Điện thoại:..........................................

ເບີແຟັກ/Số Fax:............................................

ອີເມວ/Email:...............................................